Implemented by

giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ໂຄງການຄຸ້ມຄອງທີ່ດິນ ແລະ ການວາງແຜນແບບມີສ່ວນຮ່ວມ ໄລຍະ 3 (LMDP 3)

**ປະກອບສ່ວນເຂົ້າໃນສິດການນຳໃຊ້ທີ່ດິນ ແລະ ການພັດທະນາແບບມີສ່ວນຮ່ວມຂອງປະຊາຊົນໃນພື້ນທີ່ຊົນນະບົດໃນ ສປປ ລາວ**

## ຄວາມເປັນມາ

ບັນດາກະຊວງຕ່າງໆໃນ ສປປ ລາວ ແລະ ໜ່ວຍງານທີ່ກ່ຽວຂ້ອງ ຮັບຜິດຊອບໃນວຽກງານວາງແຜນນຳໃຊ້ ແລະ ຄຸ້ມຄອງທີ່ດິນ, ເຖິງຢ່າງໃດກໍຕາມ, ບົດບາດເຫຼົ່ານີ້ມັກຈະບໍ່ໄດ້ຖືກກຳນົດຢ່າງຈະແຈ້ງ ຫຼື ຍັງມີຄວາມທັບຊ້ອນກັນໃນພາກປະຕິບັດຕົວຈິງ, ເຊິ່ງນຳໄປສູ່ການແບ່ງໜ້າທີ່ຮັບຜິດຊອບທີ່ບໍ່ຈະແຈ້ງ, ຈົນເຖິງບັນຫາໃນການຄຸ້ມຄອງບໍລິຫານຊັບພະຍາກອນທຳມະຊາດ. ນອກຈາກນັ້ນ, ຂໍ້ມູນການນຳໃຊ້ທີ່ດິນຍັງບໍ່ຈະແຈ້ງ, ເຊິ່ງເປັນສິ່ງທີ່ສຳຄັນໃນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ການນຳໃຊ້ຫຼັກການຄຸ້ມຄອງທີ່ດິນແບບຍືນຍົງໃນຕົວຈິງ. ເຖິງວ່າຫຼາຍປີທີ່ຜ່ານມາ, ໜ່ວຍງານທີ່ກ່ຽວຂ້ອງສາມາດປະກອບສ່ວນເຂົ້າໃນວຽກງານໄດ້ຢ່າງເຂັ້ມແຂງຂຶ້ນ, ແຕ່ກໍຍັງຈຳເປັນຕ້ອງມີການສົ່ງເສີມການພັດທະນາຂີດຄວາມສາມາດ ເພື່ອໃຫ້ໄດ້ປະຕິບັດຕາມແຜນຍຸດທະສາດ ແລະ ນຳໃຊ້ບັນດາເຄື່ອງມືການວາງແຜນນຳໃຊ້ທີ່ດິນ.

ເລີ່ມແຕ່ປີ 2015 ເຖິງ 2019, ໄດ້ມີການພັດທະນາເຄື່ອງມືສຳລັບການປັບປຸງຂັ້ນຕອນການວາງແຜນນຳໃຊ້ທີ່ດິນ, ເຊິ່ງເປັນສ່ວນໜຶ່ງຂອງກິດຈະກຳຂອງໂຄງການໃນໄລຍະກ່ອນ. ກິດຈະກຳດັ່ງກ່າວປະກອບມີ ລະບົບແຜນທີ່ຕາດິນແບບ ດີຈິຕອນ ເພື່ອການຂຶ້ນທະບຽນທີ່ດິນ ຫຼື "LaoLanReg", ລະບົບຂໍ້ມູນການນຳໃຊ້ທີ່ດິນ ຫຼື "LUIS" ແລະ ເຄື່ອງມືກຳນົດຂອບການນຳໃຊ້ພື້ນທີ່ "AFP". ນັບແຕ່ປີ 2020, ໂຄງການໃນໄລຍະປັດຈຸບັນ ແມ່ນໄດ້ເນັ້ນໃສ່ການຂຶ້ນທະບຽນຮັບຮອງນຳໃຊ້ບັນດາເຄື່ອງມື ແລະ ເສີມຂະຫຍາຍເຕັກນິກຂອງເຄື່ອງມືເຫຼົ່ານີ້ຂຶ້ນຕື່ມ.

## ຈຸດປະສົງ

ບັນດາໜ່ວຍງານທີ່ກ່ຽວຂ້ອງໃນທຸກລະດັບໃນ ສປປ ລາວ ມີຄວາມສາມາດໃນການນຳໃຊ້ເຄື່ອງມືການວາງແຜນນຳໃຊ້ທີ່ດິນ ເພື່ອຄຸ້ມຄອງຊັບພະຍາກອນທຳມະຊາດ, ແກ້ໄຂ ແລະ ປ້ອງກັນຂໍ້ຂັດແຍ່ງ ກ່ຽວກັບທີ່ດິນ ແລະ ຊັບພະຍາກອນ.



ກິດຈະກຳການວາງແຜນນຳໃຊ້ທີ່ດິນໂດຍໃຊ້ໂດຣນ, ຮູບຈາກແຂວງໄຊຍະບູລີ
Photo: © GIZ/ບາດ ເວີເວຈ໌

| | |
|---|---|
| **ຊື່ໂຄງການ** | ໂຄງການຄຸ້ມຄອງທີ່ດິນ ແລະ ການວາງແຜນແບບມີສ່ວນຮ່ວມ ໄລຍະ 3 (LMDP 3) |
| **ໃຫ້ທຶນໂດຍ** | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ) |
| **ຄູ່ຮ່ວມງານໂຄງການ** | ກະຊວງແຜນການ ແລະ ການຮ່ວມມື (MPI), ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (MoNRE), ແລະກະຊວງກະສິກຳ ແລະ ປ່າໄມ້ (MAF) |
| **ເຂດເປົ້າໝາຍໂຄງການ** | ສ ປປ ລາວ |
| **ໄລຍະເວລາໂຄງການ** | ຕຸລາ 2017 - ທັນວາ 2024 |

## ວິທີການດຳເນີນງານ

ໂຄງການ LMDP ແມ່ນມີ 3 ຈຸດສຸມຫຼັກຄື:

- ສະໜັບສະໜູນການປະສານງານໃນຂະແໜງທີ່ດິນ ແລະ ພັດທະນາບົດແນະນຳສຳລັບການຈັດຕັ້ງປະຕິບັດນະໂຍບາຍທີ່ດິນແບບມີຄວາມຮັບຜິດຊອບ.
- ສ້າງຄວາມອາດສາມາດໃຫ້ອຳນາດການປົກຄອງເຂົ້າໃນຂັ້ນສູນກາງ ໃຫ້ກັບເຈົ້າໜ້າທີ່ລັດ ແລະ ສະຖາບັນການສຶກສາ ເພື່ອເປັນການສ້າງຄວາມເຂັ້ມແຂງໃນໄລຍະຍາວດ້ານເຕັກນິກວິຊາການ, ທັກສະການນຳໃຊ້ລະບົບດິຈິຕອນ ແລະ ເຂົ້າໃນເຖິງບັນດາຂັ້ນຕອນໃນການຄຸ້ມຄອງທີ່ດິນ.
- ໃຫ້ຄຳແນະນຳດ້ານວິຊາການ ເພື່ອປັບປຸງ ແລະ ຍົກລະດັບ ລະບົບແຜນທີ່ຕາດິນແບບດິຈິຕອນ ເພື່ອຂຶ້ນທະບຽນທີ່ດິນ ແລະ ລະບົບຂໍ້ມູນການນຳໃຊ້ທີ່ດິນ (LUIS).

## ສິ່ງທີ່ພວກເຮົາບັນລຸ

ໃນຊ່ວງໄລຍະທີ 1 ແລະ 2 ຂອງໂຄງການ LMDP ໄດ້ຮັບຜົນສຳເລັດດັ່ງລຸ່ມນີ້:

- ນັບແຕ່ປີ 2015, ທີ່ດິນຈຳນວນ 27,317 ຕອນ ໄດ້ຮັບການຂຶ້ນທະບຽນ ແລະ ໄດ້ມີການອອກໃບຕາດິນຈຳນວນ 22,923 ສະບັບ. 70% ຂອງດິນສ່ວນບຸກຄົນ ແມ່ນອອກຊື່ເປັນຊັບເດີມຂອງແມ່ຍິງ ຫຼື ເປັນສິນສົມສ້າງ.
- ແຜນນຳໃຊ້ທີ່ດິນ ແລະ ການຄຸ້ມຄອງດິນກະສິກຳຂັ້ນບ້ານ ຈຳນວນ 94 ແຜນ ໄດ້ສຳເລັດຈັດຕັ້ງປະຕິບັດ. ປະຊາຊົນປະມານ 2,909

ຄົນ ໄດ້ຮັບການຝຶກອົບຮົມກ່ຽວກັບການບໍລິຫານຈັດການຕ່າງໆທີ່ກ່ຽວຂ້ອງກັບສັນຍາກະສິກໍາ.

- 116 ໂຄງການລົງທຶນແມ່ນໄດ້ຮັບຄໍາແນະນໍາ ໃນການປັບປຸງການດໍາເນີນການຂອງພວກເຂົາ ໃຫ້ສອດຄ່ອງກັບກົດໝາຍການລົງທຶນ, ລະບຽບການຕ່າງໆຂອງລາວ ແລະ ສາກົນ.
- ແຜນວຽກນໍາໃຊ້ພື້ນທີ່ເພື່ອການພັດທະນາ (APF) ຂອງ 6 ເມືອງ ໄດ້ຮັບການສ້າງຂຶ້ນ ໂດຍນໍາໃຊ້ຂະບວນການມີສ່ວນຮ່ວມ ຂອງປະຊາຊົນຫຼາຍກວ່າ 2,000 ຄົນ ຈາກ 40 ບ້ານ.

ໃນໄລຍະທີ 3, ໂຄງການ LMDP ໄດ້ບັນລຸຜົນສໍາເລັດດັ່ງລຸ່ມນີ້:

- ລະບົບແຜນທີ່ຕາດິນແບບດິຈິຕອນ “LaoLandReg“ ແບບໃໝ່ ໄດ້ສໍາເລັດການທົດສອບຢູ່ໃນແຂວງວຽງຈັນ ແລະ ຈະຖືກນໍາໃຊ້ໃນຂອບເຂດທົ່ວປະເທດໂດຍໄດ້ຮັບການສະໜັບສະໜູນຈາກທະນາຄານໂລກ ແລະ ທະນາຄານພັດທະນາເຢຍລະມັນ KfW.
- ບັນດາສະຖາບັນທີ່ກ່ຽວຂ້ອງກັບວຽກງານວາງແຜນນໍາໃຊ້ທີ່ດິນສາມາດເຂົ້າເຖິງລະບົບຂໍ້ມູນການນໍາໃຊ້ທີ່ດິນ ຫລື LUIS ລວມເຖິງ ແຜນນໍາໃຊ້ທີ່ດິນຫຼາຍກວ່າ 500 ແຜນ ຈາກທົ່ວປະເທດ.
- ແຜນພັດທະນາເສດຖະກິດ - ສັງຄົມຂັ້ນແຂວງໄດ້ນໍາໃຊ້ບັນດາແຜນກໍານົດພື້ນທີ່ຈາກແຂວງຫົວພັນ ແລະ ໄຊຍະບູລີ ເປັນບ່ອນອ້າງອີງ.
- ພະນັກງານລັດຫຼາຍກວ່າ 220 ທ່ານ ໄດ້ຮັບການຝຶກອົບຮົມກ່ຽວກັບການນໍາໃຊ້ເຄື່ອງມືສໍາລັບວາງແຜນກໍານົດພື້ນທີ່, ເຊັ່ນ: ລະບົບຂໍ້ມູນຂ່າວສານດ້ານພູມສາດ ຫລື GIS, ເຄື່ອງບິນບໍ່ມີຄົນຂັບ ແລະ ຝຶກອົບຮົມດ້ານການເປັນຄູຝຶກສໍາລັບບັນດາເຄື່ອງມືຄຸ້ມຄອງທີ່ດິນ.

## ບົດບາດຍິງ-ຊາຍ ແລະ ການຄຸ້ມຄອງທີ່ດິນ

ໃນເຂດຊົນນະບົດໃນ ສປປ ລາວ, ໂດຍສະເພາະແມ່ນແມ່ຍິງ, ແມ່ນພົບກັບຂໍ້ຫຍຸ້ງຍາກທາງດ້ານໂຄງສ້າງທາງສັງຄົມ ເມື່ອເວົ້າເຖິງການເຂົ້າເຖິງທີ່ດິນ ແລະ ສິດການນໍາໃຊ້ທີ່ດິນ.

ການຈັດຕັ້ງປະຕິບັດໂຄງການ LMDP ໃນໄລຍະຜ່ານມາໄດ້ຮ່ວມມືກັບພາກລັດໃນການສ້າງເຄື່ອງມືຫຼາຍຢ່າງ ເພື່ອນໍາໃຊ້ເຂົ້າໃນການປັບປຸງວຽກງານການວາງແຜນນໍາໃຊ້ທີ່ດິນ ແລະ ການບໍລິຫານລັດກ່ຽວກັບທີ່ດິນໃນ ສປປ ລາວ. ໃນໄລຍະການທົດລອງ ແລະ ຈັດຕັ້ງປະຕິບັດໃນບັນດາເມືອງເປົ້າຫມາຍ, ໂຄງການໄດ້ສະເຫນີໃຫ້ຊຸມຊົນໃນເຂດຊົນນະບົດມີສ່ວນຮ່ວມ, ເຊິ່ງປະກອບດ້ວຍແມ່ຍິງ ແລະ ບັນດາກຸ່ມຊົນເຜົ່າ, ເຂົ້າໃນການປັບປຸງການວາງແຜນ ແລະ ຂະບວນການຕັດສິນໃຈ.

ການຈັດຕັ້ງປະຕິບັດໂຄງການໃນໄລຍະປັດຈຸບັນ, ໂຄງການໄດ້ເອົາໃຈໃສ່ໃນວຽກງານດັ່ງກ່າວຫລາຍຂຶ້ນເພື່ອຮັບປະກັນວ່າແມ່ຍິງ ແລະ ຜູ້ຊາຍມີສິດເຂົ້າເຖິງ ແລະ ໄດ້ຮັບຜົນປະໂຫຍດເທົ່າທຽມກັນຈາກຜົນການຈັດຕັ້ງປະຕິບັດໂຄງການ. ການຝຶກອົບຮົມໃຫ້ແກ່ຄູຝຶກແມ່ນຕ້ອງລວມເອົາຫົວຂໍ້ກ່ຽວກັບບົດບາດຍິງ-ຊາຍເຂົ້າໃນວາລະການຝຶກອົບຮົມ ເພື່ອຝຶກອົບຮົມໃຫ້ເຈົ້າຫນ້າທີ່ພາກລັດໃຫ້ກາຍເປັນຜູ້ທີ່ມີຄວາມສາມາດຮອບດ້ານ (ຫລື ເປັນຄູໃຫ້ແກ່ຄູຝຶກ) ຫລື ຜູ້ຄຸ້ມຄອງການຝຶກອົບຮົມເພື່ອເພີ່ມຄວາມຮູ້ຄວາມເຂົ້າໃຈ ແລະ ເຊື່ອມສານບົດບາດຍິງ-ຊາຍເຂົ້າໃນການຝຶກອົບຮົມທີ່ກ່ຽວຂ້ອງກັບເຄື່ອງມືການຄຸ້ມຄອງທີ່ດິນໃນອະນາຄົດ.



ກອງປະຊຸມຮ່ວມລະຫວ່າງ ພະແນກແຜນການ ແລະ ການລົງທຶນ (DPI) ແຂວງ ໄຊຍະບູລີ ໃນການເຊື່ອມສານແຜນງານພັດທະນາເສດຖະກິດ ແລະ ສັງຄົມແຂວງ (PSEDP) ແລະ ແຜນຈັດສັນທີ່ດິນແບບມີສ່ວນຮ່ວມ. (PLAP). ຮູບຖ່າຍໂດຍ: © GIZ/ບາດ ເວີເວຈ໌

### ກ່ຽວກັບ GIZ ລາວ

GIZ, ໃນນາມເປັນສ່ວນໜຶ່ງຂອງການຮ່ວມມື ເຢຍລະມັນ ເພື່ອການພັດທະນາ, ໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວ ແຕ່ປີ 1993 ຕາງໜ້າໃຫ້ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ) ພ້ອມກັບບັນດາຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາ. ໃນປັດຈຸບັນ, GIZ ກໍາລັງສະໜັບສະໜູນບັນດາໂຄງການໃນ 3 ຂົງເຂດບູລິມະສິດຄື: ກ) ການພັດທະນາຊົນນະບົດ, ຂ) ການອະນຸລັກຮັກສາທໍາມະຊາດ ແລະ ຊັບພະຍາກອນທໍາມະຊາດ ແລະ ຄ) ການພັດທະນາເສດຖະກິດແບບຍືນຍົງ.

ສໍາລັບຂໍ້ມູນເພີ່ມຕື່ມ, ກະລຸນາເຂົ້າເບິ່ງທີ່ເວັບໄຊ www.giz.de/laos.


ຈັດພິມໂດຍ: Deutsche Gesellschaft für Internationale Zusammenarbeit (GIZ) GmbH

ສໍານັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ

ໂຄງການປັບປຸງການຄຸ້ມຄອງທີ່ດິນໃນຂົງເຂດແມ່ນໍ້າຂອງ 3 (ILM-MR 3)

ເຮືອນເລກທີ 179, ໜ່ວຍ 14, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ +856 21 316 570

www.giz.de/laos (EN); www.giz.de/laos-la (LA)

ລົງວັນທີ: ເດືອນຕຸລາ 2023

ອອກແບບໂດຍ: ໜ່ວຍງານຂໍ້ມູນຂ່າວສານ, ຫ້ອງການ GIZ ປະຈໍາ ສປປ ລາວ, ນະຄອນຫຼວງວຽງຈັນ

ຮູບຖ່າຍໂດຍ: GIZ/ບາດ ເວີເວຈ໌
ຮຽບຮຽງໂດຍ: ທ່ານນາງ ແອນເນັດຕ໌ ຊຣາມ

ຕິດຕໍ່: ທ່ານນາງ ແອນເນັດຕ໌ ຊຣາມ
(annett.schramm@giz.de)

ຫ້ອງການ GIZ ຈະເປັນຜູ້ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ.

ຕາງໜ້າໃຫ້: ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ເຢຍລະມັນ (BMZ)

https://www.mrlg.org/laos/